**ບົດຄຳເຫັນຂອງທ່ານ ດຣ. ບໍ່ສາຍຄຳ ວົງດາລາ**
**ລັດຖະມົນຕີວ່າການກະຊວງພະລັງງານ ແລະ ບໍ່ແຮ່ ຂອງ ສປປລາວ**
**ເນື່ອງໃນໂອກາດກອງປະຊຸມສຳມະນາລາວໄທ ກ່ຽວກັບການພັດທະນາຂະແໜງໄຟຟ້າແບບຍືນຍົງ**

- ທ່ານ ດຣ. ປີຍະສະວັດ ອຳມະຣານັນ, ລັດຖະມົນຕີວ່າການກະຊວງພະລັງງານ ຂອງຣາຊະອານາຈັກໄທ;
- ທ່ານ Ian Porter ຫົວໜ້າຫ້ອງການທະນາຄານໂລກສຳລັບ ສປປລາວ ແລະ ຣາຊະອານາຈັກໄທ;
- ທ່ານຍິງ ແລະ ທ່ານຊາຍ ທີ່ມາຮ່ວມ

ມື້ນີ້ຂ້າພະເຈົ້າຂໍຖືເປັນກຽດຢ່າງສູງ ທີ່ໄດ້ມີໂອກາດເປັນເຈົ້າພາບຮ່ວມ ໃນກອງປະ ຊຸມສຳມະນາລາວ-ໄທ ກ່ຽວກັບການພັດທະນາໄຟຟ້າແບບຍືນຍົງ. ຂະບວນການຊື້ຂາຍໄຟຟ້າ ລະຫວ່າງສອງປະເທດລາວ ໄທ ຂອງພວກເຮົາ ທີ່ຜະລິດຈາກໂຄງການ ລົງທຶນໂດຍພາກ ເອກະຊົນ ໄດ້ເລີ້ມຈາກບົດບັນທຶກຄວາມເຂົ້າໃຈສະບັບທຳອິດ ທີ່ເຊັນກັນໃນປີ 1993 ແລະ ໃນເວ ລາຕໍ່ມາສອງລັດຖະບານໄດ້ຕົກລົງເພີ້ມເຕີມໃນປີ 1996. ຈາກນັ້ນ ໃນປີ 2006 ກໍ່ໄດ້ເພີ້ມຂຶ້ນອີກລວມກັນເປັນ 5000 ເມກາວັດ ຮອດປີ 2015. ໃນການປະຕິບັດບົດບັນທຶກ ທີ່ໄດ້ເຊັນກັນໄວ້ແລ້ວ ມາເຖິງປັດຈຸບັນນີ້ ມີສອງໂຄງ ການທີ່ໄດ້ເປີດຂາຍໄຟຟ້າມາຍັງປະເທດໄທແລ້ວຄືໂຄງການນ້ຳເທີນ-ຫີນບູນ ແລະ ໂຄງການຫ້ວຍເຫາະ, ສອງໂຄງການກຳລັງດຳເນີນການກໍ່ສ້າງຄືໂຄງການນ້ຳເທີນ 2 ແລະ ໂຄງການນ້ຳງື່ມ 2 ແລະ ອີກໂຄງການຈຳນວນໜຶ່ງ ໄດ້ຕົກລົງລາຄາໄຟຟ້າ ແລະ ກຳລັງຢູ່ໃນການກະກຽມເອກະສານ ເພື່ອຈັດຫາທຶນມາກໍ່ສ້າງໂຄງການ ເພື່ອໃຫ້ບັນລຸວັນເປີດສົ່ງໄຟຟ້າ ຕາມທີ່ໄດ້ກຳນົດໄວ້.

ການພັດທະນາໂຄງການໄຟຟ້າຕາມແບບສຶກສາອອກແບບຈັດຫາທຶນກໍ່ສ້າງດຳເນີນງານ ແລະ ມອບໂອນ ແມ່ນເປັນໄປຕາມຂໍ້ກຳນົດຂອງລະບຽບກົດໝາຍ ຂອງສປປ ລາວ ຕາມ ຄວາມຮຽກຮ້ອງຂອງຜູ້ລົງທຶນ ແລະ ຜູ້ສະໜອງທຶນແຕ່ລະໄລຍະ. ຜູ້ລົງທຶນຍັງມີພັນທະຮັບຜິດຊອບຄ່າໃຊ້ຈ່າຍໃນການສຶກສາຜົນກະທົບ ສິ່ງແວດລ້ອມສັງຄົມ ແລະ ຊອກຫາມາດຕະການຮອງຮັບ ເຊິ່ງທັງໝົດໄດ້ຈິດເຂົ້າເປັນຄ່າສິ້ນເປືອງ ຂອງໂຄງການ. ນອກຈາກນີ້ແລ້ວ ຜູ້ລົງທຶນຍັງມີພັນທະເສຽຄ່ານຳໃຊ້ຊັບພະຍາກອນທຳມະຊາດ ແລະ ຈ່າຍພາສີອາກອນແບບຜ່ອນຜັນ ຕາມລະບຽບກົດໝາຍ ຂອງສປປ ລາວ ເພື່ອໃຫ້ລັດ ຖະບານສາມາດນຳ ໃຊ້ເຂົ້າໃນການ ພັດທະນາ ແລະ ປົກປັກຮັກສາແຫຼ່ງພະລັງງານ ໃຫ້ມີຄວາມຍືນຍົງ. ລັດຖະບານລາວ ໃນນາມຜູ້ໃຫ້ສິດສຳປະທານ ມີໜ້າທີ່ຕິດຕາມກວດກາການສ້າງບົດສຶກສາທາງດ້ານເຕັກນິກ, ບົດສຶກສາຕີລາຄາ ຜົນກະທົບຕໍ່ສິ່ງແວດ ລ້ອມ/ສັງຄົມ ຕາມມາຖານ ພ້ອມດ້ວຍມາດຕະການຮອງຮັບຜົນກະທົບດັ່ງກ່າວ. ໃນການພັດທະນາບັນດາໂຄງ ການໄຟຟ້າໃນຕໍ່ໜ້າ, ລັດຖະບານ ລາວ ຈະສືບຕໍ່ປະຕິບັດລະບຽບການ ທີ່ໄດ້ຕົກລົງກັນໄປແລ້ວນັ້ນ.

ພວກຂ້າພະເຈົ້າສະໜັບສະໜູນ ແນວຄິດ ຂອງທະນາຄານໂລກທີ່ຖືເອົາວຽກງານສິ່ງແວດ ລ້ອມ ສັງຄົມເປັນບັນຫາສຳຄັນ.

ໃນການຕົກລົງສັນຍາຊື້ຂາຍໄຟຟ້າ ລະຫວ່າງໂຄງການພັດທະນາຢູ່ ສປປລາວ ແລະ ການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ ຜ່ານມາແມ່ນໄດ້ຮັບຄວາມສະໜັບສະໜູນຈາກລັດຖະບານໄທ ເປັນຢ່າງດີ. ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ມາໃນໂອກາດນີ້ດ້ວຍ. ສັນຍາຊື້ຂາຍໄຟຟ້າ ກໍ່ໄດ້ຮັບການພັດທະນາເປັນໄລຍະມາ ຕາມສະພາບ ແລະ ຄວາມຮຽກຮ້ອງຕ້ອງ ການຂອງທະນາຄານຜູ້ສະໜອງທຶນ. ໃນການເຊັນສັນຍາຊື້ຂາຍໄຟຟ້າ, ລັດຖະບານ ສປປລາວ ກໍ່ໄດ້ອອກຈົດໝາຍຢືນຢັນເຖິງມາຕະການຮອງຮັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມໃນ ໂຄງການນັ້ນໆ ໃຫ້ແກ່ການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ. ນອກຈາກນັ້ນແລ້ວ ສັນຍາສຳປະທານ ກໍ່ໄດ້ມີຄວາມກົມກຽວກັບບັນດາເອກະສານໂຄງ ການອື່ນໆເຊັ່ນ ສັນຍາຊື້ຂາຍໄຟຟ້າ. ເພື່ອສະທ້ອນໃຫ້ ເຫັນວຽກງານຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ ໂຄງການຕ້ອງໄດ້ຮັບ ຜິດຊອບມູນຄ່າໃຊ້ຈ່າຍ ການນຳໃຊ້ສິ່ງແວດລ້ອມ  ໃຫ້ຮັບປະກັນແຫຼ່ງສະໜອງພະລັງງານ ໄດ້ຖືກພັດທະນາແບບຍືນຍົງ.  ຍ້ອນເຫດ ຜົນທີ່ກ່າວມານັ້ນ, ການທົບທວນຄືນໃໝ່ຫຼັກການກຳນົດລາຄາໄຟຟ້າ ສຳລັບ ໂຄງການໃນອານາຄົດ ຈຶ່ງເປັນບັນຫາ ທີ່ພວກເຮົາຈະໄດ້ພິຈາລະນາຮ່ວມກັນໃຫ້ສອດຄ່ອງຕື່ມອີກ.ນອກຈາກນີ້ແລ້ວ, ທັງສອງຝ່າຍພວກເຮົາຄວນຈະລິເລີ້ມປຶກສາຫາລື ກ່ຽວກັບການຂາຍຊີດີແອັມ (CDM) ຮ່ວມກັນ ທີ່ອາດໄດ້ຈາກການພັດທະນາໂຄງການໄຟຟ້ານ້ຳຕົກ ທີ່ບໍ່ສ້າງມູນລະພິດ.

ຍ້ອນວ່າບັນດາລະບຽບກົດໝາຍ ຂອງສປປລາວ ທີ່ຄູ້ມຄອງການພັດທະນາໂຄງການໄຟຟ້າ ແບບຍືນຍົງ ຍັງຢູ່ໃນຂັ້ນຕອນພັດທະນາ,  ລັດຖະບານ ສປປລາວຈຶ່ງໄດ້ຮວມມືກັບບັນດາອົງການ ການເງິນສາກົນນຳໂດຍທະນາຄານໂລກ ໃນການປັບປຸງບັນດາຫຼັກການ ກ່ຽວກັບການພັດທະນາ ໂຄງການໄຟຟ້າ ເພື່ອໃຫ້ເປັນທີ່ຮັບໄດ້ແກ່ຝ່າຍຕ່າງໆ ເຊິ່ງລວມມີຜູ້ລົງທຶນ, ຜູ້ຊື້ໄຟຟ້າ ແລະ ຜູ້ສະ ໜອງທຶນ. ບາງລະບຽບຫຼັກການກໍ່ໄດ້ສ້າງຂື້ນມາໃໝ່ ເພື່ອໃຫ້ສະທ້ອນເຫັນ ພັນທະ ຂອງລັດຖະບານລາວ ໃນການຮອງຮັບຕໍ່ຜົນກະທົບສິ່ງແວດລ້ອມ/ສັງຄົມ ທີ່ອາດເກີດມາ ຈາກການພັດທະ ນາໂຄງການໃນໄລຍະຍາວນານ. ການມີຜົນບັງຄັບໃຊ້ບັນດາລະບຽບຫຼັກການ ແລະ ກົດໝາຍດັ່ງ ກ່າວໃຫ້ກົມກຽວ ກັບບັນດາຫຼັກການຂອງຜູ້ຊື້ໄຟຟ້າ ແລະ ຜູ້ສະໜອງທຶນ ມີຄວາມຈຳເປັນຕ້ອງໄດ້ປຶກສາຫາລື ເພື່ອຊອກຫາຄວາມເໝາະສົມ.

ເພີ້ມຈາກແຜນການຊື້ຂາຍໄຟຟ້າຈຳນວນ 5000 ເມກາວັດນັ້ນ ລັດຖະບານລາວ ແລະ ລັດຖະບານໄທ ຍັງໄດ້ລິເລີ້ມປຶກສາຫາລືຈະເພີ້ມການຊື້ຂາຍໄຟຟ້ານຳກັນອີກປະມານ 2000 ເມກາວັດ, ຫຼືອາດສູງກວ່ານັ້ນ,  ສຳລັບໄລຍະຫຼັງປີ 2015. ໃນການພັດທະນາບັນດາໂຄງການຕ່າງໆ ຕາມແຜນການເພີ້ມນີ້ ມູນຄ່າໃຊ້ຈ່າຍເພື່ອສິ່ງແວດລ້ອມ ແລະ ສັງຄົມອາດຈະແພງກວ່າບັນດາ ໂຄງການຜ່ານມາ ຍ້ອນວ່າພວກເຮົາ ຈະຕ້ອງປັບປຸງມາດຖານຕ່າງໆ ເພື່ອຄວາມຍືນຍົງ ຂອງໂຄງ ການດັ່ງກ່າວ. ນະທີ່ນີ້, ຂ້າພະເຈົ້າຂໍຢັ້ງຢືນວ່າ ລັດຖະບານລາວມີນະໂຍບາຍ ໃນການເປີດກວ້າງການພັດທະນາ

ຂະແໜງໄຟຟ້ານ້ຳຕົກ ເພື່ອຜະລິດໄຟຟ້າຕອບສະໜອງຄວາມຮຽກຮ້ອງຕ້ອງການພາຍໃນປະເທດ ໃຫ້ພຽງພໍ ແລະ ສົ່ງອອກ ຂາຍໄປຍັງປະເທດເພື່ອນບ້ານໃນເຂດລຸ່ມແມ່ນ້ຳຂອງ ແລະ ຂົງເຂດອາຊີຕາເວັນອອກສ່ຽງໄຕ້ ຕາມຄວາມຕ້ອງການແຕ່ລະໄລຍະ ແລະ ຕາມຄວາມສາມາດຂອງການພັດທະນາໃນ ສປປ ລາວ.

ກອງປະຊຸມສຳມະນາທີ່ຈັດຂື້ນໃນວັນນີ້ ມີຄວາມຫມາຍທີ່ສຳຄັນ ໃຫ້ກາລະໂອກາດແກ່ ຝ່າຍຕ່າງໆ ທີ່ມີສວ່ນຮ່ວມໃນການພັດທະນາໂຄງການໄຟຟ້າ ແລະ ການຊື້ຂາຍໄຟຟ້າ ລະ ຫວ່າງ ສປປ ລາວ ກັບຣາຊະອານາຈັກໄທ ໄດ້ສະທອ້ນໃຫ້ເຫັນທິດທາງ ແຜນການ ຂອງຕົນ ໃນການພັດ ທະນາ, ການຈັດຫາທຶນ ແລະ ການຊື້ຂາຍໄຟຟ້າ. ຂ້າພະເຈົ້າເຊື່ອວ່າກອງ ປະຊຸມນີ້ ຈະເສີມສ້າງ ການຮ່ວມມື ແລະ ການຊື້ຂາຍພະລັງງານໄຟຟ້າລະຫວ່າງສອງປະເທດ ກໍ່ຄືລະຫວ່າງປະເທດ ໃນພາກ ພື້ນໃຫ້ນັບມື້ນັບຂະຫຍາຍຕົວຂື້ນ ເຊິ່ງກໍ່ເປັນການສະທ້ອນເຖີງການ ປະຕິບັດບົດບັນທຶກ ການເຊື່ອມຕໍ່ສາຍສົ່ງໄຟຟ້າ ໃນບັນດາປະເທດອາຊຽນ  ທີ່ພວກເຮົາຫາກໍ່ໄດ້ລົງນາມນຳກັນໃນກອງປະຊຸມລັດຖະມົນຕີອາຊຽນ ຄັ້ວທີ 25 ທີ່ປະເທດສິງກະໂປຜ່ານມາຫມໍ່ນີ້. ໃນນາມກະຊວງ ພະລັງ ງານ ແລະ ບໍ່ແຮ່ ຂອງສປປ ລາວ ຂ້າພະ ເຈົ້າຂໍຖືໂອກາດນີ້ສະແດງຄວາມຂອບໃຈຕໍ່ລັດຖະບານໄທ ທີ່ໄດ້ໃຫ້ການສະຫນັບ ສະຫນູນ ການຊື້ ຂາຍໄຟຟ້າລະຫວ່າງສອງປະເທດ  ດຳເນີນໄປຢ່າງໄດ້ຮັບຜົນ. ຂໍຂອບ ໃຈມາຍັງທະນາຄານໂລກ ທີ່ໃຫ້ການສະຫນັບສະຫນູນໃນການພັດທະນາຂະແໜງໄຟຟ້າ ໃນ ສປປລາວ ກໍ່ຄືການອຳນວຍໃນການ ຈັດກອງປະຊຸມສຳມະ ນາຮວ່ມຄັ້ງນີ້.

ຂໍອວ່ຍພອນໃຫ້ແກ່ກອງປະຊຸມຄັ້ງນີ້ໃຫ້ມີຜົນສຳເລັດສູງ.

ຂໍຂອບໃຈ.

# Speech
# By
# Dr. Bosaykham VONGDARA

Minister of Energy and Mines of Lao PDR
At the High Level Lao-Thai Forum on Sustainable Development of Hydropower Sector

- Excellency Dr. Pyasavasti Amrananh, Minister of Energy of the Royal Thai Government
- Mr. Ian Porter, World Bank Country Director-Thailand and Laos
- Ladies and Gentlemen

Today I am honored to have an opportunity to be present at the High Level Lao-Thai Forum on Sustainable Development for the Hydropower Sector. Recalling the power sale particularly from projects invested by the private sector, the process began in 1993 when our two Governments signed the first Memorandum of Understanding on 1500 megawatts which was then subsequently superseded in 1996 by the second Memorandum of Understanding containing 3000 megawatts for the supply of electricity up to 2006. In December 2006 the third Memorandum of Understanding has increased the capacity to 5000 megawatts for the supply of electricity up to 2015. Having implemented such above Memoranda of Understanding two projects i.e. Nam Theun-Hinboun Hydropower Project and Houay Ho Hydropower project are now under operation, two projects such as Nam Theun 2 Hydropower Project and Nam Ngum 2 Hydropower Project are under construction and many more have concluded the Tariff MOUs with EGAT and are now finalizing the project documents aiming at achieving commercial operation dates as stipulated by the parties.

The development of the projects on the basis of study-design-build-operate-transfer has been carried out in accordance with applicable Lao laws and in acquiescence to the requirements of financiers as imposed on the projects from time to time. The developers have obligations to cover costs for environmental and social impact studies and mitigation measures that are ultimately incorporated into project costs. At the same time, the developers are required by Lao laws to pay resource usage levies and taxes to the Lao Government on an incentive basis as to enable the Lao Government to use such revenues to further develop the power sector in a sustainable manner. The Lao Government as the concession rights grantor is committed to reviewing all technical, environmental and social studies and monitoring their implementation to ensure compliance to our standards. In the future we will continue adhering to our rules and regulations that have already been enacted. We fully support a move from the World Bank that pays special attention to the environmental and social considerations.

In the past, the negotiation on power sale from the Lao projects has been auspiciously supported by the Thai Government. Today I wish to express my sincere thanks to the Thai Government for its support. The power purchase agreements have been developed from time to time to accommodate requirements of commercial lenders. Upon signing the power purchase agreements the Lao Government also issued the Government Undertakings to EGAT confirming compliance of environmental and social assessment studies and their mitigation measures. Moreover the provisions of the concession

agreements have been well dovetailed with other project agreements such as power purchase agreements. In order to reflect the environmental and social consideration in the development of future projects the developers are obliged to cover costs of environmental and social planning and mitigation measures. Therefore, the principles for energy tariff calculation may need to be further reviewed adequately by us. Furthermore, going forward, we should initiate a discussion on the sale of Carbon Credit Development that may be benefited from the development of hydropower projects which are considered as non-carbon emission production.

As our legal framework pertaining sustainable development of the power sector is under a process of development, we are now improving our rules and regulations governing the power sector to be acceptable to all stakeholders including international financial institutions, power buyers and developers. Several rules have been newly set up so as to reflect the Lao Government's commitments to mitigating possible impacts resulting from the course of development of the projects in the long run. Enforcement of our laws on the developers to meet requirements of financiers and power buyers will need to be strengthened.

In addition to the implementation of the 5000 megawatts as agreed in the 2006-MOU, we are now discussing additional 2000 megawatts, or higher, to be supplied to Thailand after 2015. In developing such additional megawatts the project cost per megawatts may be higher than the previous projects as we will improve several standards for the sustainable development. Today, once again, I would like to confirm our openness policy on the development of the hydropower sector as to sufficiently meet demand in the country as well as to export the electricity to neighboring countries in the Greater Mekong Sub-region and to the rest of the ASEAN countries considering the demand for electricity in the region, from time to time, and project financing mobilization.

Today's Forum is an important event that gives opportunity to all project stakeholders to reflect their views on the development, financing and power sale between the two countries. I strongly believe that this will streamline our power exchange program between our two neighboring countries and will realize the proceedings on the sub-regional interconnection amongst ASEAN countries that was signed at the 25$^{th}$ ASEAN Energy Ministers Meeting that took place in Singapore recently. On behalf of the Ministry of Energy and Mines of the Lao PDR I would like to extend my sincere appreciation to the Royal Thai Government for its auspice to the realization of the power exchange program between the two countries. My special thanks are made to the World Bank for its support to the development of the hydropower sector in Laos as well as to this Forum.

In closing, I would like to wish this Forum a good success.

Thank you very much.